ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງການເງິນ

ເລກທີ 1105 /ກງ

ນະຄອນຫຼວງວຽງຈັນ, ວັນທີ 02 ເມສາ 2024

# ແຈ້ງການ

ຮຽນ: ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

**ເລື່ອງ: ການຈັດຕັ້ງປະຕິບັດເງິນອຸດໜູນຄ່າຄອງຊີບ ເພີ່ມ 150.000 ກີບ ປີ 2024 ແລະ ການປະຕິບັດນະໂຍບາຍຕໍ່ຄູອາສາສະໝັກ, ພະນັກງານບຳນານ ແລະ ທະຫານຊາຍແດນ.**

- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 71/ສພຊ, ລົງວັນທີ 16 ທັນວາ 2015 ແລະ ສະບັບເລກທີ 13/ສພຊ, ລົງວັນທີ 17 ພະຈິກ 2021;
- ອີງຕາມ ດຳລັດຂອງ ນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021;
- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 612/ຫສນຍ, ລົງວັນທີ 25 ມີນາ 2024;
- ອີງຕາມ ບົດລາຍງານຂອງກົມງົບປະມານແຫ່ງລັດ ສະບັບເລກທີ 0313 /ກງລ2, ລົງວັນທີ 01 ເມສາ 2024

ກະຊວງ ການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານ ເພື່ອຜັນຂະຫຍາຍແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 612/ຫສນຍ, ລົງວັນທີ 25 ມີນາ 2024 ໂດຍໃຫ້ສືບຕໍ່ຮັກສານະໂຍບາຍເງິນເດືອນ ແລະ ເງິນອຸດໜູນທີ່ໄດ້ປະຕິບັດມາແລ້ວໃນທ້າຍປີ 2023 ແລະ ເຫັນດີໃຫ້ເພີ່ມເງິນອຸດໜູນຄ່າຄອງຊີບ ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານບຳນານ ແລະ ຜູ້ເສຍອົງຄະ ໃນປີ 2024 ຕື່ມ ຈຳນວນ 150.000 ກີບ ຕໍ່ຄົນຕໍ່ເດືອນ ເປັນເອກະພາບທັງໝົດ ໂດຍເລີ່ມປະຕິບັດ ໃນງວດ I ປີ 2024 ເປັນຕົ້ນໄປ, ຈຶ່ງໄດ້ອອກແຈ້ງການເພື່ອຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ສືບຕໍ່ປະຕິບັດ **ນະໂຍບາຍເງິນເດືອນ ແລະ** ເງິນອຸດໜູນຕ່າງໆ ທີ່ໄດ້ປະຕິບັດໃນທ້າຍປີ 2023 ຜ່ານມາ ໂດຍໃຫ້ອີງຕາມ ຄຳແນະນຳຂອງ ກະຊວງການເງິນ ເລກທີ 3073/ກງ, ລົງວັນທີ 2 ຕຸລາ 2023 ແລະ ຄຳແນະນຳ ເລກທີ 3231/ກງ,ລົງວັນທີ 17 ຕຸລາ 2023;
2. ໃຫ້ຄິດໄລ່ເງິນອຸດໜູນຄ່າຄອງຊີບ ເພີ່ມ ຈຳນວນ **150.000 ກີບ ຕໍ່ຄົນຕໍ່ເດືອນ**, ແຕ່ເນື່ອງຈາກວ່າໃນໄລຍະຕົ້ນປີ 2024 ຍັງບໍ່ທັນໄດ້ເບີກຈ່າຍ ຈຶ່ງໃຫ້ຄິດໄລ່ຍ້ອນຫຼັງນັບແຕ່ເດືອນ **ມັງກອນ 2024** ເປັນຕົ້ນມາ ໂດຍຄິດໄລ່ເຂົ້າໃນຕາຕະລາງເບີກຈ່າຍເງິນເດືອນງວດ **2 ປີ 2024**, ສຳລັບງວດ 3 ເປັນຕົ້ນໄປໃຫ້ສືບຕໍ່ຄິດໄລ່ເງິນອຸດໜູນຄ່າຄອງຊີບ ເຂົ້າໃນຕາຕະລາງເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍຕ່າງໆ ໃຫ້ເປັນປົກກະຕິ;

ສຳລັບການປະຕິບັດ ເງິນອຸດໜູນຄ່າຄອງຊີບ ຂອງ 5 ເປົ້າໝາຍ (ພະນັກງານຮັບອຸດໜູນໄລຍະຍາວ ໃນລະບົບປະກັນສັງຄົມ ທີ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄຸ້ມຄອງ) ໃຫ້ສືບຕໍ່ປະຕິບັດຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 1236/ຫສນຍ, ລົງວັນທີ 6 ກໍລະກົດ 2023;

3. ການເບີກຈ່າຍເງິນເດືອນໆ **ເມສາ 2024** ໃຫ້ຮີບຮ້ອນປະກອບເອກະສານ ສະເໜີເຖິງຂະແໜງການເງິນ (ງົບປະມານ ແລະ ຄັງເງິນແຫ່ງຊາດ) ຊ້າສຸດບໍ່ໃຫ້ກາຍວັນທີ **9 ເມສາ 2024** ແລະ ເບີກຈ່າຍໃຫ້ສຳເລັດກ່ອນວັນທີ **12 ເມສາ 2024**;

4. **ການປະຕິບັດນະໂຍບາຍ** ຕໍ່ຄູອາສາສະໝັກ, ພະນັກງານບຳນານ ແລະ ທະຫານຊາຍແດນ ສອນຊ່ວຍໃນໂຮງຮຽນພາກລັດ ທີ່ຂາດຄູສອນ ສຳລັບຊັ້ນການສຶກສາກ່ອນໄວຮຽນ ແລະ ສາມັນສຶກສາ ໃຫ້ປະຕິບັດຕາມຂໍ້ຕົກລົງຂອງ ກະຊວງ ການເງິນ ເລກທີ 1007/ກງ, ລົງວັນທີ 22 ມີນາ 2024; ສຳລັບແຫຼ່ງທຶນໃນການເບີກຈ່າຍ ໃຫ້ 6 ແຂວງ ຄື: ແຂວງ ຜົ້ງສາລີ, ຫົວພັນ, ບໍລິຄຳໄຊ, ເຊກອງ, ຈຳປາສັກ ແລະ ໄຊສົມບູນ ໃຫ້ ກະຊວງສຶກສາທິການ ແລະ ກິລາ ເປັນໃຈກາງສົມທົບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມການຕົກລົງກັນຜ່ານມາ;

5. ໃຫ້ບັນດາກະຊວງ-ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຮີບຮ້ອນຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ ແລະ ທັນເວລາ, ພາຍຫຼັງການຈັດຕັ້ງປະຕິບັດຫາກພົບຂໍ້ຫຍຸ້ງຍາກ ໃຫ້ລາຍງານຄືນ ກະຊວງ ການເງິນ ແລະ ກະຊວງ ພາຍໃນ ເພື່ອຊາບ ແລະ ຄົ້ນຄ້ວາຕາມພາລະບົດບາດ.

ລັດຖະມົນຕີ

ກະຊວງການເງິນ

ລັດຖະມົນຕີ

ສັນຕິພາບ ພົມວິຫານ

ບ່ອນສົ່ງ:

| | | |
|---|---|---|
| 1. | ກົມຄຸ້ມຄອງລັດຖະສາກອນ | 1 ສະບັບ |
| 2. | ກົມງົບປະມານແຫ່ງລັດ | 1 ສະບັບ |
| 3. | ຄັງເງິນແຫ່ງຊາດ/ຄັງເງິນທ້ອງຖິ່ນ | 1 ສະບັບ |
| 4. | ບັນດາຫ້ອງການ,ກົມແຜນການ-ການເງິນ ບັນດາກະຊວງ-ອົງການ | 1 ສະບັບ |
| 5. | ພະແນກການເງິນ ແຂວງ/ນະຄອນຫຼວງວຽງຈັນ | 1 ສະບັບ |
| 6. | ສຳເນົາ | 1 ສະບັບ |